STATE OF WASHINGTON

DEPARTMENT OF SOCIAL AND HEALTH SERVICES

Developmental Disabilities Administration (DDA)

# ຈົດໝາຍວຽນຂອງຄວາມເຂົ້າໃຈໃນການຢູ່ເຮືອນຫລວງເຊົ່າຕໍ່
# ການໃຫ້ການເປັນພະຍານຂອງຜູ້ອາສັຍຢູ່

**Subleased Housing Memorandum of Understanding Renter Attestation**

ອີງຕາມ 42 CFR 441.301, ສະຖານທີ່ຕັ້ງຢູ່ຕາມເຮືອນແລະຊຸມຊົນຕ້ອງມີຄຸນນະພາບບາງຢ່າງໂດຍອີງຕາມຄວາມຕ້ອງການຂອງຜູ້ເຂົ້າຮ່ວມນຳ HCBS ຕາມທີ່ຖືກຊີ້ບອກຢູ່ໃນແຜນການບໍຣິການລວມສູນໃສ່ບຸກຄົນຂອງເຂົາເຈົ້າ.

ຈົດໝາຍວຽນຂອງຄວາມເຂົ້າໃຈໃນການຢູ່ເຮືອນຫລວງເຊົ່າຕໍ່ໃບນີ້ຕ້ອງຖືກເຊັນຊື່ໃສ່ໂດຍຜູ້ອາສັຍຢູ່ແຕ່ລະຄົນແລະ/ຫລືຜູ້ຕາງໜ້າຕາມກົດໝາຍ,ຊຶ່ງຈະແຈ້ງບອກເຂົາເຈົ້າກ່ຽວກັບສິດທິຂອງເຂົາເຈົ້າໃນຣະຫວ່າງທີ່ອາສັຍຢູ່ໃນເຮືອນທີ່ຖືກເຊົ່າຕໍ່ແລະກຳລັງໄດ້ຮັບການອູ້ມຊູໃນບ່ອນອາສັຍຢູ່ຈາກຜູ້ບໍຣິການ.ພາຍໃຕ້ການໃຫ້ການເປັນພະຍານອັນນີ້,ການເຊົ່າຕໍ່ແມ່ນໃບສັນຍາຕາມກົດໝາຍຊຶ່ງໃນນັ້ນຜູ້ບໍຣິການອາສັຍຢູ່ທີ່ຖືກອູ້ມຊູຜູ້ທີ່ກຳລັງເຊົ່າເຮືອນຢູ່,ເຊົ່າເຮືອນຕໍ່ໃຫ້ຄົນອື່ນອີກ.ບຸກຄົນນີ້ແມ່ນຜູ້ອາສັຍຢູ່ຕໍ່.ຜູ້ບໍຣິການອາສັຍຢູ່ທີ່ຖືກອູ້ມຊູຕ້ອງຮັບຜິດຊອບສຳລັບເງື່ອນໄຂຂອງສັນຍາເຊົ່າດັ້ງເດີມນຳເຈົ້າຂອງບ້ານແລະຜູ້ອາສັຍຢູ່ຕໍ່ຕ້ອງຈ່າຍເງິນໃຫ້ຜູ້ບໍຣິການພາຍໃຕ້ເງື່ອນໄຂຂອງການເຊົ່າຕໍ່.

ຫ້ອງການ: ____________________

ທີ່ຢູ່ເຮືອນ: ____________________

ຂ້າພະເຈົ້າ,ຜູ້ຕາງໜ້າຕາມກົດໝາຍຂອງຂ້າພະເຈົ້າຖ້າຫາກວ່າຂ້າພະເຈົ້າມີຄົນນຶ່ງ,ໄດ້ຖືກບອກແລະເຂົ້າໃຈວ່າຂ້າພະເຈົ້າມີສິດທິຕໍ່ລົງໄປນີ້ເມື່ອຍ້າຍເຂົ້າໄປຫລືກຳລັງອາສັຍຢູ່ປັດຈຸບັນຢູ່ໃນເຮືອນເຊົ່າຕໍ່ແລະກຳລັງໄດ້ຮັບການບໍຣິການອາສັຍຢູ່ທີ່ຖືກຊ່ວຍເຫລືອຈາກຜູ້ບໍຣິການຄົນດຽວກັນ:

- ທີ່ຈະອາສັຍຢູ່ໃນເຮືອນຕາມໃຈເລືອກຂອງຂ້າພະເຈົ້າຢູ່ໃນຣັດວໍຊິງຕັນ.
- ທີ່ຈະເລືອກເອົາທີ່ຈະຍ້າຍເຮືອນໄດ້ທຸກໆເວລາ.
- ທີ່ຈະເຊັນຊື່ແລະໄດ້ຮັບໃບໂກປີຂອງສັນຍາເຊົ່າຕໍ່ຂອງຂ້າພະເຈົ້າຫລືສັນຍາບັງຄັບໃຊ້ໄດ້ຕາມກົດໝາຍອື່ນໆນຳຜູ້ບໍຣິການຊຶ່ງຮັບປະກັນ,ຢ່າງຕ່ຳສຸດ,ຄວາມຮັບຜິດຊອບແລະການປ້ອງກັນອັນດຽວກັນຈາກການສັ່ງໃຫ້ຍ້າຍອອກທີ່ຜູ້ອາສັຍຢູ່ມີຢູ່ພາຍໃຕ້ Washington State Residential Landlord-Tenant Act ແລະການປ້ອງກັນຜູ້ອາສັຍຢູ່ຂອງຄາວຕີແລະເມືອງທີ່ກ່ຽວຂ້ອງບ່ອນອື່ນໆ.

ນອກເຫນືອຈາກນັ້ນ,ຂ້າພະເຈົ້າ,ຫລືຜູ້ຕາງໜ້າຕາມກົດໝາຍຂອງຂ້າພະເຈົ້າຖ້າຫາກວ່າຂ້າພະເຈົ້າມີຄົນນຶ່ງ,ແລະຜູ້ບໍຣິການອາສັຍຢູ່ທີ່ຖືກອູ້ມຊູຂອງຂ້າພະເຈົ້າຮັບຮູ້ແລະເຂົ້າໃຈໃນສິ່ງຕໍ່ລົງໄປນີ້:

- ມັນເປັນທາງເລືອກຂອງຂ້າພະເຈົ້າທີ່ຈະເຊົ່າເຮືອນທີ່ຖືກໃຫ້ເຊົ່າຕໍ່ໂດຍຜູ້ບໍຣິການອາສັຍຢູ່ທີ່ຖືກອູ້ມຊູ.
- ຂ້າພະເຈົ້າບໍ່ຖືກບັງໃຫ້ອາສັຍຢູ່ໃນເຮືອນທີ່ຖືກເຊົ່າຕໍ່ເພື່ອວ່າຈະໄດ້ຮັບການບໍຣິການນຳຜູ້ບໍຣິການອາສັຍຢູ່ທີ່ຖືກອູ້ມຊູ.
- DDA ບັງໃຫ້ເຮືອນນີ້ຕ້ອງສອດຄ່ອງນຳເງື່ອນໄຂສຳລັບສະຖານທີ່ຕັ້ງອີງຢູ່ຕາມເຮືອນແລະຊຸມຊົນທີ່ຖືກບັງຢູ່ໃນ 42 CFR 441.301.
- ຖ້າຫາກວ່າຂ້າພະເຈົ້າເລືອກເອົາທີ່ຈະຍ້າຍອອກຈາກເຮືອນທີ່ຖືກເຊົ່າຕໍ່,ຜູ້ບໍຣິການຕ້ອງແຈ້ງບອກຂ້າພະເຈົ້າກ່ຽວກັບຣາຍຈ່າຍທີ່ຂ້າພະເຈົ້າຈະຕ້ອງໄດ້ຮັບຜິດຊອບທີ່ຈະຈ່າຍແລະຄວາມຂ້ອງໃຈໃນການດຳເນີນການທີ່ຂ້າພະເຈົ້າຄວນຈະພິຈາຣະນາເບິ່ງໃນເວລາຍ້າຍເຮືອນ.
- ຖ້າຫາກວ່າຂ້າພະເຈົ້າເລືອກເອົາທີ່ຈະບໍ່ຮັບເອົາການບໍຣິການຕໍ່ໄປອີກແລ້ວຈາກຜູ້ບໍຣິການອາສັຍຢູ່ທີ່ຖືກອູ້ມຊູ,ຂ້າພະເຈົ້າຈະຕ້ອງຮັບຜິດຊອບສຳລັບການເຮັດສັນຍາເຊົ່າໃຫມ່ຫລືການຈັດຫານຳເຈົ້າຂອງບ້ານຖ້າຫາກວ່າຂ້າພະເຈົ້າຢາກຈະຢູ່ໃນເຮືອນ.
- ການໄລ່ອອກຈາກເຮືອນຈະຖືກຖືວ່າຕ້ອງປະຕິບັດຕາມກົດໝາຍເຈົ້າຂອງບ້ານ-ຜູ້ອາສັຍຢູ່.
- ການສິ້ນສຸດຂອງການບໍຣິການອາສັຍຢູ່ທີ່ຖືກອູ້ມຊູຕ້ອງປະຕິບັດຕາມ DDA Policy 4.24 ແລະ WAC 388-101D-0196 - 388-101D-0200.

| ຊື່ຂອງລູກຄ້າ | ຖ້າກ່ຽວຂ້ອງນຳ,ຊື່ຂອງຜູ້ຕາງໜ້າຕາມກົດໝາຍ |
|---|---|
| ລາຍເຊັນຂອງລູກຄ້າ/ຜູ້ຕາງໜ້າຕາມກົດໝາຍຂອງລູກຄ້າ | ວັນທີ |